ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------------------------------

<u>ກະຊວງ ຄົມະນາຄົມ ຂົນສົ່ງ</u>
<u>ໄປສະນີ ແລະ ກໍ່ສ້າງ</u>
<u>ກົມຂົນສົ່ງ</u>

0052[redacted]
ເລກທີ່............../ກຂສ

## <u>ຂໍ້ແນະນຳ ກ່ຽວກັບ ການກວດກາເຕັກນິກເຮືອ</u>

<u>ເຖິງ:</u> ບັນດາພະແນກ ຄົມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ
ປະຈຳແຂວງ, ກຳແພງນະຄອນ ແລະເຂດພິເສດ.

ເຮືອ-ແມ່ນພາຫະນະ ຂົນສົ່ງທາງນ້ຳ ທີ່ທຳການຂົນສົ່ງສິນຄ້າ ແລະໂດຍສານ ຊຶ່ງໄດ້ຂຶ້ນທະບຽນ ຢ່າງຖືກຕອ້ງ ຕາມລະບຽບຫຼັກການ ຄຸ້ມຄອງພາຫະນະ ຂົນສົ່ງທາງນ້ຳ.

ໃນໄລຍະຜ່ານມາ ການກວດກາ ສະພາບເຕັກນິກ ຂອງເຮືອໃນບາງແຂວງ ເປັນຕົ້ນແມ່ນແຂວງ ທີ່ນຳໃຊ້ເສັ້ນທາງນ້ຳຂອງ ກໍ່ເຮັດໄດ້ດີ ແລະບາງແຂວງ ຍັງບໍ່ທັນໄດ້ ເອົາໃຈໃສ່ເທົ່າທີ່ຄວນ ຊຶ່ງເປັນສາຍເຫດໜຶ່ງ ທີ່ພາໃຫ້ມີອຸປະຕິເຫດເກີດຂຶ້ນ ຍອ້ນຂາດມາດຖານ ທາງເຕັກນິກຂອງເຮືອ.

ເພື່ອເຮັດໃຫ້ວຽກງານ ກວດກາເຕັກນິກເຮືອ ມີປະສິດທິຜົນ, ມີຂໍ້ສະດວກ ແລະເປັນຂໍ້ມູນພື້ນຖານ ໃຫ້ແກ່ວິຊາການ ກວດກາເຕັກນິກ.

ກົມຂົນສົ່ງ ຈຶ່ງມີຂໍ້ແນະນຳສະບັບນີ້ ເພື່ອ ກວດກາເຕັກນິກເຮືອ ແລະ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ເຂັ້ມງວດ.

ມາດຖານ ກວດກາເຕັກນິກເຮືອ ເລກທີ່ 0030/ກຂສ, ລົງວັນທີ່ 8/01/1996ໄດ້ຕິດຂັດສົ່ງມາພອ້ມນີ້.

1. ໃນການກວດກາເຕັກນິກເຮືອ ແຕ່ລະຄັ້ງຕອ້ງເຮັດ ເປັນບົດບັນທຶກ ການກວດກາຢ່າງລະອຽດ ໂດຍອີງຕາມ ມາດຖານຕົວຈິງ, ໃນເວລາທຳການກວດການັ້ນ ຫາກເຫັນວ່າເຮືອລຳໃດ ບໍ່ໄດ້ຕາມມາດຕະຖານ ແມ່ນບໍ່ຄວນໃຫ້ເຄື່ອນໄຫວ ເພາະມັນຈະບໍ່ຮັບປະກັນ ຄວາມປອດໄພ ໃຫ້ແກ່ຜູ້ໂດຍສານ ແລະ ສິນຄ້າ.

2. ລະບຽບການ ອອກໃບກວດກາເຕັກນິກ ແມ່ນກຳນົດປາໃຊ້ໄດ້ 1 ປີ. ເວັ້ນເສັຍແຕ່ ໃນກໍລະນີ ເຈົ້າໜ້າທີ່ກວດກາ ເຫັນສະພາບເຕັກນິກ ສ່ວນໃດສ່ວນໜຶ່ງ ຂອງເຮືອຫາກຜິດປົກະຕິ. ບໍ່ຮັບປະກັນ ຄວາມປອດໄພ, ຕອ້ງທຳການກວດກາ ກ່ອນກຳນົດ ແລະໃຫ້ຍຸດຕິການເຄື່ອນໄຫວ ຂອງເຮືອໄວ້, ຖ້າບໍ່ໄດ້ຮັບການປັວແປງ ຫຼືຕິດຕັ້ງໃຫ້ຖືກຕອ້ງເສັຍກ່ອນ.

3. ເພື່ອເຮັດໃຫ້ວຽກງານ ກວດກາເຕັກນິກເຮືອ ມີລັກສະນະສົມບູນ ແລະຄົບຖວ້ນ, ເຈົ້າຂອງ ຫຼື ຜູ້ຮັບຜິດຊອບເຮືອ ຕອ້ງແຈ້ງ ເອກະສານສຳຄັນ ປະຈຳເຮືອ ເຊັ່ນ: ໃບທະບຽນເຮືອ,ພອ້ມປ້າຍໝາຍເລກທະບຽນເຮືອ ຕອ້ງຂຽນ ຫຼືຕິດໝາຍຢູ່ບ່ອນ ທີ່ເບິ່ງເຫັນງ່າຍ, ໃບທະບຽນທຸລະກິດ, ປື້ມເດີນເຮືອ.

4. ມອບໃຫ້ພະແນກ ຄ.ຂ.ປ.ກ ປະຈຳແຂວງ, ກຳແພງນະຄອນ ແລະເຂດພິເສດ ຈັດຕັ້ງປະຕິບັດຂໍ້ແນະນຳ ສະບັບນີ້ ໃຫ້ແທດເໝາະ ກັບສະພາບຕົວຈິງ ແລະ ມີປະສິດຕິຜົນດີ.

5. ຜ່ານການດຳເນີນຕົວຈິງ ຖ້າມີບັນຫາໃດ ຫຍຸ້ງຍາກ ຈົ່ງຮີບດ່ວນລາຍງານ ໃຫ້ກົມຂົນສົ່ງ ຊາບນຳ.

ວຽງຈັນ, ວັນທີ 08/01/1996.

ຫົວໜ້າກົມຂົນສົ່ງ

ກົມຂົນສົ່ງ

ບຸນໂຮມ ພົມສະຫວັນ